# ຄຳແນະນຳ

# ກ່ຽວກັບ

# ພຣະຄັມພີ

# ຄຳແນະນຳ

# ກ່ຽວກັບ

# ພຣະຄັມພີ

©1969 The Lao Christian Literature
In Laos: The Christian & Missionary
Alliance.
1977 2nd Printing
1986 3rd Printing

ກ. ສ. ໑໙໘໙ ພິມຄັ້ງທີ່໒ ໑.໐໐໐ ເຫລັ້ມ

*Courtesy of Bible Literature International*

# ຄຳນຳ

ໜັງສືນີ້ໄດ້ຂຽນເພື່ອຊ່ວຍເຫລືອພວກຄຣິສຕຽນລາວໃຫ້ເຂົ້າໃຈພຣະຄັມພີດີຂຶ້ນ. ຖ້າພວກເຮົາຄິດວ່າ ພຣະຄັມພີ ເປັນໜັງສືແຫ່ງຊີວິດ ກໍຂໍໃຫ້ພວກເຮົາທຸກຄົນ ຮຽນຮູ້ຈັກ ໜັງສືນີ້ເຖີ້ນ.

ອ່ານເພື່ອລໍລ້ຽງຊີວິດແລະຈິດໃຈຂອງຕົນເອງ ພຣະຄັມພີເປັນໜັງສືທີ່ເຂົ້າໃຈຍາກ ແຕ່ເຮົາສາມາດເຂົ້າໃຈໄດ້ ດ້ວຍອຳນາດແລະລິດເດດແຫ່ງພຣະວິນຍານບໍລິສຸດ ສນັ້ນເມື່ອຈະອ່ານຂໍໃຫ້ອ້ອນວອນເສັຍກ່ອນ ຊ່ອງທາງທີ່ຈະຊ່ວຍໃຫ້ເຂົ້າໃຈໄດ້ຄືຄຳອະທິບາຍຂອງຜູ້ທີ່ໄດ້ຮ່ຳຮຽນພຣະຄັມພີມາຫລາຍແລ້ວ.

ຂໍ້ຄວາມທັງຫລາຍທີ່ມີຢູ່ໃນໜັງສືນີ້. ໄດ້ຂຽນເປັນຄຳອະທິບາຍ ແລະຄຳແນະນຳໃຫ້ເຂົ້າໃຈພຣະຄັມພີທຸກ ໆ ເຫລັ້ມ. ເມື່ອທ່ານຢາກຮຽນຮູ້ພຣະຄັມພີເຫລັ້ມໃດ ຂໍເຊີນອ່ານໃຫ້ເຂົ້າໃຈຄຳອະທິບາຍໃນໜັງສືນີ້ເສັຍກ່ອນ ແລ້ວຈຶ່ງຄ່ອຍອ່ານພຣະຄັມພີເຫລັ້ມນັ້ນ ໆ. ສນັ້ນຈຶ່ງຂໍເຊີນທ່ານອ່ານແລະສຶກສາເຖີ້ນ ໜັງສືນີ້ຈະໄດ້ຊ່ວຍພວກທ່ານໃຫ້ເຂົ້າໃຈພຣະ-ຄັມພີຕໍ່ໄປ ຂໍໃຫ້ພຣະເຈົ້າຊົງອວຍພອນແກ່ທ່ານທັງຫລາຍຜູ້ອ່ານໜັງສືນີ້.

# ວ່າດ້ວຍພຣະຄັມພີ

ພຣະຄັມພີເປັນໜັງສືທີ່ປະເສີດ ກວ່າໜັງສືທັງໝົດໃນໂລກ ເພື່ອເປັນໜັງສືແຫ່ງພຣະວັຈນະ (ພຣະຄຳ) ທີ່ໃຫ້ມີຊີວິດຕລອດໄປເປັນນິດ. ຊຶ່ງພຣະເຈົ້າໄດ້ຊົງໂຜດສແດງໃຫ້ເຫັນ ພຣະລັກສນະແລະແຜນການ ຂອງພຣະອົງ ເພື່ອຊ່ອຍ ມະນຸດສໂລກ ໃຫ້ພົ້ນຈາກ ອຳນາດຂອງພະຍາມານ.

ພຣະຄັມພີເປັນໜັງສືທີ່ໜ້າອັສຈັນທີ່ສຸດ ຜູ້ຂຽນມີປະມານ ສີ່ສິບຄົນ ໄດ້ລົງມືຂຽນເຣື່ອງດຽວກັນຕັ້ງແຕ່ຕົ້ນເດີມເຖິງຄຳປາກົດມີຣະຍະຣະຫວ່າງ ໑.໖໐໐ ປີ ແຕ່ຂໍ້ຄວາມຂອງພວກເຂົາກໍ່ຖືກຕ້ອງກັນຢ່າງແປກປລາດ. ແລະຂໍ້ຄວາມທັງຫລາຍທີ່ຂຽນນັ້ນແມ່ນພຣະວັຈນະຂອງພຣະ-ເຈົ້າທັງໝົດເພາະຜູ້ຂຽນແຕ່ລະຄົນ ໄດ້ຖືກພຣະວິນຍານບໍຣິສຸດຊົງດົນບັນດານໃຫ້ຂຽນ ໒ ຕີໂມເຕ ໓:໑໖, ໒ ເປໂຕ ໑:໒໑) ພຣະຄັມພີທັງໝົດ ໖໖ ເຫລັ້ມ ຊຶ່ງແບ່ງເປັນສອງພາກຄື: ພາກພຣະຄັມພີເດີມມີຢູ່ ໓໙ ເຫລັ້ມ ແລະພາກພຣະຄັມພີໃໝ່ມີຢູ່ ໒໗ ເຫລັ້ມ ອົງພຣະຄຣິສຊົງເປັນຕົ້ນເຫດແຫ່ງພຣະຄັມພີເຫລົ່ານີ້. ໃນພຣະຄັມພີເດີມນັ້ນອົງພຣະຄຣິສໄດ້ຖືກປົກບັງໄວ້ ແລະຖືກກ່າວເຖິງ ແຕ່ໃນພຣະຄັມພີໃໝ່ ໄດ້ຖືກ ເປີດເຜີຍແລະສແດງໃຫ້ເຫັນທຸກຢ່າງ.

ພຣະຄັມພີທັງສອງພາກບໍ່ເໝືອນກັນຄື :

ພາສາທີ່ໃຊ້ຂຽນພຣະຄັມພີເດີມຂຽນດ້ວຍພາສາເຮັບເຣີ ສ່ວນພຣະຄັມພີຂຽນດ້ວຍພາສາເຣເລນ ແຕ່ຕໍ່ມາຈົນທຸກວັນນີ້ໄດ້ແປເປັນພາສາຕ່າງ ໆ ກວ່ານຶ່ງພັນພາສາ. ໃນພຣະຄັມພີເດີມມີຄຳສັນຍາເດີມຣະຫວ່າງພຣະເຈົ້າກັບມະນຸດ ຊຶ່ງໄດ້ຈັດແຈ່ງທາງສຳລັບຄຳສັນຍາໃໝ່ ແລະຄຳສັນຍາເດີມໄດ້ເຖິງທີ່ສຳເຣັດໃນຄຳສັນຍາໃໝ່ ໃນພຣະຄັມພີເດີມໄດ້ເລົ່າເຣື່ອງຈົນຊາດອິສຣາເອັນແຕ່ພຣະຄັມພີໃໝ່ໄດ້ເລົ່າເຣື່ອງຄຣິສຕະຈັກແຫ່ງພຣະເຢຊູຄຣິສ.

# ວ່າດ້ວຍຄຳສັນຍາເດີມ

ໃນພຣະຄັມພີເດີມມີຄຳປະຕິຍານສາມປະການຄື :

## ໑. ຄຳປະຕິຍານຂອງພຣະເຈົ້າທີ່ມີຕໍ່ອັບລາຮາມ :

ວ່າຊາວຕ່າງປະເທດຈະໄດ້ຮັບພອນດ້ວຍເຊື້ອສາຍຂອງທ່ານ. ຄື ເມື່ອເວລາພຣະເຈົ້າຊົງເລືອກເອົາອັບລາຮາມນັ້ນພຣະເຈົ້າຊົງມີພຣະປະສົງຢາກຕັ້ງພວກນຶ່ງໄວ້ຕ່າງຫາກ ເພື່ອເປັນເຄື່ອງມືຂອງພຣະອົງຊ່ອຍມະນຸດໃຫ້ພົ້ນຈາກໂທດ. ເມື່ອຊົງເລືອກເອົາອັບລາຮາມແລ້ວພຣະອົງກໍຊົງເຫັນເມຊີອາ ( ເມຊີ ) ຜູ້ຈະເກີດມາຈາກເຊື້ອສາຍຂອງອັບລາຮາມ.

## ໒. ຄຳປະຕິຍານຂອງພຣະເຈົ້າທີ່ມີຕໍ່ພວກເຮັບເຣີ :

ວ່າຖ້າເຂົາປົວລະບັດພຣະເຈົ້າ ດ້ວຍຄວາມສັດຊື່ ແລະຈິງໃຈແລ້ວເຂົາຈະຈເຣີນຮຸ່ງເຮືອງກາຍເປັນປະເທດໃຫຍ່. ຖ້າເຂົາຫາກບໍ່ປະຖິ້ມຮູບເຄົາຣົບມາປົວລະບັດພຣະເຈົ້າ ພວກເຂົາກໍຈະຖືກທຳລາຍຈົນພິນາດຈິບຫາຍ.

ສນັ້ນພຣະເຈົ້າຈິ່ງຊົງພຍາຍາມບອກສອນປະເທດນຶ່ງ ໃນປະເທດເຫລົ່ານັ້ນໃຫ້ຮູ້ຈັກວ່າ ມີພຣະເຈົ້າແຕ່ອົງດຽວເທົ່ານັ້ນທີ່ຄວນເຄົາຣົບແລະນັບຖື.

## ໓. ຄຳປະຕິຍານຂອງພຣະເຈົ້າທີ່ມີຕໍ່ກະສັດດາວິດ:

ວ່າຄອບຄົວ ຂອງກະສັດດາວິດ ຈະໄດ້ສເວີຍຣາຊ ສືບ ໆ ໄປເປັນນິດ ເມື່ອເວລາພັກພວກຂອງພຣະອົງເຈົ້າກາຍເປັນປະເທດໃຫຍ່ນັ້ນ ພຣະເຈົ້າໄດ້ຊົງເລືອກເອົາຄອບຄົວນຶ່ງໄວ້ຄື ຄອບຄົວຂອງດາວິດເພື່ອເປັນຊ່ອງທາງ ໃຫ້ຄຳປະຕິຍານໄດ້ເຖິງທີ່ສຳເຣັດ ຄືໃຫ້ມີກະສັດອົງໃຫຍ່ເກີດຈາກຄອບຄົວນັ້ນ ເພື່ອໃຫ້ອານາຈັກນີ້ໄດ້ຕັ້ງຢູ່ເປັນນິດ.

## ວ່າດ້ວຍທາງແຫ່ງຄວາມພົ້ນໃນພຣະຄັມພີເດີມ :

໑. ພຣະເຈົ້າຊົງເລືອກພວກຊາວເຮັບເຣີຫລືອິສຣາເອັນ ໃຫ້ເປັນຊາດຂອງເມຊີອາ ຄືພຣະເຢຊູ

໒. ພຣະເຈົ້າ ຊົງເລືອກເອົາ ຄອບຄົວຂອງທ່ານດາວິດ ໃຫ້ເປັນປູ່ຍ່າຂອງເມຊີອາ

໓. ພຣະເຢຊູ ຊົງປະສູດ ຈາກເຊື້ອສາຍ ຂອງກະສັດ ດາວິດເພື່ອເປັນຜູ້ຊ່ອຍໃຫ້ພົ້ນ